# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ເອກະສານລາຍງານການເງິນ

ສຳລັບໄລຍະແຕ່ວັນທີ 26 ມີນາ 2015 (ມື້ສ້າງຕັ້ງ) ເຖິງ ວັນທີ 31 ທັນວາ 2015

# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

## ສາລະບານ


| | ໜ້າ |
|---|---|
| ຂໍ້ມູນທົ່ວໄປ | 1 |
| ບົດລາຍງານຂອງຄະນະບໍລິຫານ | 2 |
| ເອກະສານລາຍງານຂອງນັກກວດສອບອິດສະຫຼະ | 3 - 4 |
| ໃບລາຍງານຜົນໄດ້ຮັບ | 5 - 6 |
| ໃບສະຫລຸບຊັບສົມບັດ | 7 - 8 |
| ໃບລາຍງານສ່ວນປ່ຽນແປງທຶນຕົນເອງ | 9 |
| ໃບລາຍງານກະແສເງິນສົດ | 10 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 11 - 30 |

# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

## ຂໍ້ມູນທົ່ວໄປ

### ສາຂາ

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ແມ່ນສາຂາຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ ທີ່ໄດ້ສ້າງຕັ້ງຂຶ້ນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ"). ສາຂາດຳເນີນທຸລະກິດພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານ ສະບັບເລກທີ 06/ທຫລ ອອກໃຫ້ໂດຍ ທະນາຄານ ແຫ່ງ ສປປລາວ ("ທຫລ") ລົງວັນທີ 19 ກຸມພາ 2015.

ທຶນຈົດທະບຽນໃນເບື້ອງຕົ້ນຂອງສາຂາແມ່ນ 405,100,000,000 ກີບ. ນະວັນທີ 31 ທັນວາ 2015, ທຶນຈົດທະບຽນທີ່ຖອກແລ້ວຂອງທະນາຄານແມ່ນ 405,100,000,000 ກີບ.

ການເຄື່ອນໄຫວຕົ້ນຕໍຂອງທະນາຄານ ແມ່ນໃຫ້ບໍລິການລະດົມທຶນ ແລະ ສະໜອງເງິນກູ້ເພື່ອປັບປຸງ ແລະ ສ້າງຄວາມເຂັ້ມແຂງໃຫ້ເສດຖະກິດຂອງລາວ.

ສາຂາຕັ້ງຢູ່ອາຄານ ວຽງຈັນ ເຊັນເຕີ, ຖະໜົນຄູວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

### ຄະນະບໍລິຫານ

ສະມາຊິກຂອງຄະນະບໍລິຫານ ໃນໄລຍະແຕ່ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015 ແລະ ນະວັນທີ ຂອງເອກະສານລາຍງານການເງິນສະບັບນີ້ ລວມມີ:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ Li Zhiyong | ຜູ້ຈັດການທົ່ວໄປ | ແຕ່ງຕັ້ງ ວັນທີ 26 ມີນາ 2015 |

### ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງທະນາຄານ ໃນໄລຍະແຕ່ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015 ແລະ ນະວັນທີ ຂອງເອກະສານລາຍງານການເງິນສະບັບນີ້ ແມ່ນທ່ານ Li Zhiyong, ຜູ້ຈັດການທົ່ວໄປ.

### ນັກກວດສອບບັນຊີ

ນັກກວດສອບບັນຊີ ຂອງທະນາຄານ ແມ່ນ ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ.

# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງ ແລະ ເອກະສານລາຍງານການເງິນຂອງທະນາຄານ ນະວັນທີ ແລະ ສຳລັບແຕ່ໄລຍະວັນທີ 26 ມີນາ 2015 ເຖິງ 31 ທັນວາ 2015.

**ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນ**

ຄະນະບໍລິຫານຂອງສາຂາແມ່ນ ມີຄວາມຮັບຜິດຊອບ ໃນການກະກຽມ ເອກະສານລາຍງານການເງິນຂອງແຕ່ລະປີການບັນຊີ ໃຫ້ຖືກຕ້ອງຕາມຄວາມເປັນຈິງຂອງສາຂາ, ຜົນປະກອບການ ແລະ ກະແສເງິນສົດໃນປີ. ໃນສ້າງເອກະສານລາຍງານການເງິນດັ່ງກ່າວ, ຄະນະບໍລິຫານຂອງສາຂາຕ້ອງປະຕິບັດດັ່ງນີ້:

- ຄັດເລືອກເອົາບັນດານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝໍ່າສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່າບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງ ໄດ້ຖືກປະຕິບັດໂດຍປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງທີ່ເປີດເຜີຍ ແລະ ອະທິບາຍ ຢູ່ໃນເອກະສານລາຍງານການເງິນ;
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມຕໍ່ເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ທະນາຄານຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າສາຂາ ຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານ ຮັບປະກັນວ່າ ບັນດາຂໍ້ມູນທາງການເງິນທີ່ຖືກບັນທຶກໄວ້ນັ້ນ ໄດ້ຖືກສະແດງເຖິງຄວາມຖືກຕ້ອງຢູ່ຕະຫຼອດເວລາ ແລະ ຮັບປະກັນວ່າທຸກໆການບັນທຶກບັນຊີ ແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້. ຄະນະບໍລິຫານຂອງທະນາຄານຍັງຮັບຜິດຊອບຕໍ່ການຮັກສາຊັບສົມບັດຂອງສາຂາ ແລະ ດ້ວຍເຫດນັ້ນຕ້ອງມີຂັ້ນຕອນທີ່ເໝາະສົມເພື່ອປ້ອງກັນ ແລະ ຄົ້ນຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານ ຂໍຢັ້ງຢືນວ່າ ສາຂາໄດ້ປະຕິບັດຕາມຂໍ້ກຳນົດທີ່ ກ່າວມາຂ້າງເທິງໃນການກະກຽມ ເອກະສານລາຍງານການເງິນ ນະວັນທີ ແລະ ສຳລັບແຕ່ໄລຍະວັນທີ 26 ມີນາ 2015 ເຖິງ 31 ທັນວາ 2015.

*ຖະແຫລງການຂອງຄະນະບໍລິຫານ*

ຄະນະບໍລິຫານ ມີຄວາມຍິນດີຖະແຫລງການວ່າ ເອກະສານລາຍງານການເງິນແມ່ນໄດ້ສະແດງພາບພົດອັນຖືກຕ້ອງ ແລະ ມີຄວາມຍຸຕິທຳກ່ຽວກັບຖານະທາງການເງິນຂອງທະນາຄານ ນະເວລາທ້າຍປີ ວັນທີ 31 ທັນວາ 2015 ລວມທັງຜົນການດຳເນີນງານຂອງທະນາຄານ ແລະ ກະແສເງິນສົດແຕ່ໄລຍະວັນທີ 26 ມີນາ 2015 ເຖິງ 31 ທັນວາ 2015 ອີງຕາມກົດໝາຍບັນຊີຂອງ ສປປ ລາວ ແລະ ລະບຽບທີ່ວາງອອກໂດຍທະນາຄານແຫ່ງ ສປປ ລາວ ໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນ.

ໃນນາມ ແລະ ຕາງໜ້າຂອງຄະນະບໍລິຫານ:

ທ່ານ Li Zhiyong
ຜູ້ຈັດການທົ່ວໄປ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2016

**EY**
Building a better working world

Ernst & Young Lao Limited.
6th Floor, Capital Tower
23 Singha Road, Nongbone Village
Saysettha District, Vientiane Capital, Lao PDR

Tel : +856 21 455 077
Fax: +856 21 455 078
ey.com

ເລກທີອ້າງອີງ: 61245636/ 18353158

## ບົດລາຍງານຂອງນັກກວດສອບອິດສະຫຼະ

**ຮຽນ: ເຈົ້າຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂານະຄອນຫຼວງວຽງຈັນ**

ພວກຂ້າພະເຈົ້າ ໄດ້ດຳເນີນການກວດສອບ ເອກະສານລາຍງານການເງິນຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ເຊິ່ງປະກອບດ້ວຍໃບສະຫຼຸບຊັບສິນບັດ ນະວັນທີ 31 ທັນວາ 2015, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນຕົນເອງ ແລະ ໃບລາຍງານກະແສເງິນສົດໃນໄລຍະແຕ່ວັນທີ 26 ມີນາ 2015 ເຖິງ 31 ທັນວາ 2015 ແລະ ບົດສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນອື່ນໆ ເຊິ່ງລາຍງານ ຢູ່ໜ້າ 5 ຫາ 30.

### *ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນ*

ຄະນະບໍລິຫານຂອງທະນາຄານ ແມ່ນຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນໃຫ້ຖືກຕ້ອງ ໂດຍສອດຄ່ອງກັບມາດຕະຖານສາກົນດ້ານການລາຍງານການເງິນ, ລະບຽບການທີ່ວາງອອກໂດຍ ທະນາຄານ ແຫ່ງ ສປປ ລາວ ແລະ ການຄວບຄຸມພາຍໃນທີ່ຄະນະບໍລິຫານເຫັນວ່າມີຄວາມຈຳເປັນເພື່ອກະກຽມເອກະສານລາຍງານການເງິນທີ່ຖືກຕ້ອງ ເຊິ່ງປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ອັນເນື່ອງມາຈາກການສໍ້ໂກງ ຫລື ຍ້ອນຄວາມຜິດພາດຕ່າງໆ.

### *ຄວາມຮັບຜິດຊອບຂອງນັກກວດສອບອິດສະຫຼະ*

ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າ ແມ່ນອອກຄຳເຫັນຕໍ່ກັບເອກະສານລາຍງານການເງິນເຫຼົ່ານີ້ບົນພື້ນຖານຜົນການກວດສອບຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບ. ມາດຕະຖານເຫຼົ່ານັ້ນຮຽກຮ້ອງໃຫ້ພວກຂ້າພະເຈົ້າປະຕິບັດຕາມຂໍ້ບັນຍັດດ້ານຈັນຍາບັນ, ວາງແຜນ ແລະ ດຳເນີນການກວດສອບເພື່ອໃຫ້ໄດ້ຮັບຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນ ແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ.

ການກວດສອບລວມມີ ຂັ້ນຕອນການດຳເນີນການຕ່າງໆເພື່ອເກັບກຳຫຼັກຖານຢັ້ງຢືນຄວາມຖືກຕ້ອງຂອງຈຳນວນເງິນ ແລະ ການເປີດເຜີຍຂໍ້ມູນໃນເອກະສານລາຍງານການເງິນ. ຂັ້ນຕອນການຄັດເລືອກຂຶ້ນກັບການພິຈາລະນາຂອງທີມງານນັກກວດສອບ, ເຊິ່ງລວມເຖິງການປະເມີນຄວາມສ່ຽງຂໍ້ຜິດພາດອັນໃຫຍ່ຫຼວງໃນເອກະສານລາຍງານການເງິນ ບໍ່ວ່າເກີດຈາກການສໍ້ໂກງ ຫຼື ຄວາມຜິດພາດຕ່າງໆ. ໃນການປະເມີນຄວາມສ່ຽງເຫຼົ່ານັ້ນນັກກວດສອບໄດ້ພິຈາລະນາເຖິງການຄວບຄຸມພາຍໃນທີ່ພົວພັນເຖິງການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນທີ່ຖືກຕ້ອງ ເພື່ອເປັນແບບແຜນຂັ້ນຕອນການກວດສອບທີ່ສົມເຫດຜົນຕາມສະພາບການ, ແຕ່ບໍ່ແມ່ນຈຸດປະສົງເພື່ອການສະແດງຄວາມເຫັນທີ່ສົ່ງຜົນເຖິງການຄວບຄຸມພາຍໃນຂອງທະນາຄານ. ການກວດສອບໄດ້ລວມເອົາທັງການປະເມີນນະໂຍບາຍການບັນຊີທີ່ໄດ້ນຳໃຊ້ ແລະ ຄວາມສົມເຫດສົມຜົນໃນການຄາດຄະເນທາງການບັນຊີທີ່ຄະນະບໍລິຫານວາງອອກ, ກໍ່ຄືການປະເມີນທັງໝົດຂອງການນຳສະເໜີເອກະສານລາຍງານການເງິນ.

ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານທີ່ໄດ້ມາຈາກການກວດສອບນັ້ນ ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານ ໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

EY

Building a better
working world

**ຄຳເຫັນ**

ໃນຄຳເຫັນຂອງພວກຂ້າພະເຈົ້າເຫັນວ່າ ເອກະສານລາຍງານການເງິນໄດ້ສະແດງຖານະການເງິນອັນຖືກຕ້ອງຕາມຄວາມເປັນຈິງຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂານະຄອນຫຼວງວຽງຈັນ ນະວັນທີ 31 ທັນວາ 2015 ລວມທັງຜົນປະກອບການ ແລະ ກະແສເງິນສົດຂອງທະນາຄານ ສຳລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ 31 ທັນວາ 2015 ຕາມກົດໝາຍການບັນຊີຂອງ ສປປ ລາວ ແລະ ລະບຽບທີ່ ອອກໂດຍ ທຫລ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

Ernst & Young Lao Ltd

ERNST & YOUNG
LAO CO.,LTD

ນະຄອນຫລວງວຽງຈັນ, ສປປ ລາວ

31 ມີນາ 2016

# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານຜົນໄດ້ຮັບ

ສຳລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ 31 ທັນວາ 2015

| *ລະຫັດ* | *ລາຍການ* | *ບົດ ອະທິບາຍ ເລກທີ* | *ສຳລັບໄລຍະ ແຕ່ 26 ມີນາ 2015 ເຖິງ 31 ທັນວາ 2015 ລ້ານກີບ* |
|---|---|---|---|
| **A** | **ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ** | | |
| **1** | **ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | **3** | **6,553** |
| 1.1 | ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນຈາກທຸລະກຳລະຫວ່າງທະນາຄານ | | 17 |
| 1.2 | ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນຈາກລູກຄ້າ | | 2,611 |
| 1.3 | ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນອື່ນໆ | | 3,925 |
| **2** | **ລາຍຈ່າຍດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | **3** | **(1,505)** |
| 2.1 | ລາຍຈ່າຍດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນຈາກທຸລະກຳລະຫວ່າງທະນາຄານ | | (1,378) |
| 2.2 | ລາຍຈ່າຍດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນຈາກລູກຄ້າ | | (127) |
| **I.** | **ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | **3** | **5,048** |
| **3** | **ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າ** | **4** | **180** |
| **4** | **ລາຍຈ່າຍຄ່າທຳນຽມ ແລະ ຄ່ານາຍໜ້າ** | | **(57)** |
| **5** | **ກຳໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ** | **5** | **394** |
| **II.** | **ລາຍຮັບສຸດທິຈາກການດຳເນີນງານ** | | **5,565** |
| **B** | **ລາຍຮັບ ແລະ ລາຍຈ່າຍອື່ນໆ** | | |
| **6** | **ລາຍຮັບຈາກການດຳເນີນງານອື່ນໆ** | | **489** |
| **7** | **ລາຍຈ່າຍບໍລິຫານ** | | **(15,400)** |
| 7.1 | ເງິນເດືອນ ແລະ ລາຍຈ່າຍໃຫ້ພະນັກງານ | 6 | (7,076) |
| 7.2 | ລາຍຈ່າຍບໍລິຫານອື່ນໆ | 7 | (8,324) |
| **8** | **ຫັກຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ** | | **(3,291)** |
| **9** | **ລາຍຈ່າຍຈາກການດຳເນີນງານອື່ນໆ** | **8** | **(1,468)** |

## ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານຜົນໄດ້ຮັບ (ຕໍ່)

ສຳລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ 31 ທັນວາ 2015

| *ລະຫັດ* | *ລາຍການ* | *ບົດ ອະທິບາຍ ເລກທີ* | *ສຳລັບໄລຍະ ແຕ່ 26 ມີນາ 2015 ເຖິງ 31 ທັນວາ 2015 ລ້ານກີບ* |
|---|---|---|---|
| **III.** | **ຂາດທຶນທັງໝົດກ່ອນອາກອນ** | | **(14,105)** |
| **10** | **ລາຍຈ່າຍອາກອນກຳໄລ** | **20** | **-** |
| **IV.** | **ຂາດທຶນຫຼັງອາກອນ** | | **(14,105)** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການບໍລິຫານການເງິນ ແລະ ໜ່ວຍບໍລິການ ການດຳເນີນງານ

ອະນຸມັດໂດຍ:

ທ່ານ Li Zhiyong
ຜູ້ຈັດການທົ່ວໄປ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2016

# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບສະຫຼຸບຊັບສິນບັດ
ນະວັນທີ 31 ທັນວາ 2015

| *ລະຫັດ* | *ຊັບສິນ* | *ບົດ ອະທິບາຍ ເລກທີ* | *31 ທັນວາ 2015 ລ້ານກີບ* |
|---|---|---|---|
| **I** | **ເງິນສົດ ແລະ ເງິນຝາກ ຢູ່ ທຫລ** | | **372,123** |
| 1 | ເງິນສົດໃນກຳມື | 9 | 4,260 |
| 2 | ເງິນຝາກກັບ ທຫລ | 10 | 367,863 |
| **II** | **ໜີ້ຕ້ອງຮັບຈາກທະນາຄານອື່ນ** | **11** | **37,775** |
| 1 | ເງິນຝາກກະແສລາຍວັນ | | 37,775 |
| **III** | **ລົງທຶນໃນຫຼັກຊັບ** | **12** | **407,400** |
| 1 | ຫຼັກຊັບຖືກໄວ້ຈົນຄົບກຳນົດ | | 407,400 |
| **IV** | **ເງິນກູ້ໃຫ້ລູກຄ້າ, ເງິນແຮສຸດທິສຳລັບໜີ້ທີ່ບໍ່ເກີດດອກອອກຜົນ** | **13** | **97,888** |
| **V** | **ຊັບສິນບັດຄົງທີ່** | | **14,385** |
| 1 | ຊັບສິນບັດຄົງທີ່ມີຕົວຕົນ | 14.1 | 13,072 |
| 2 | ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 14.2 | 1,313 |
| **VI** | **ຊັບສິນອື່ນໆ** | | **23,867** |
| 1 | ດອກເບ້ຍຄ້າງຮັບ | 15 | 4,198 |
| 2 | ຊັບສິນອື່ນໆ | 16 | 19,669 |
| | **ລວມຍອດຊັບສິນ** | | **953,438** |

# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບສະຫຼຸບຊັບສິນບັດ (ຕໍ່)
ນະວັນທີ 31 ທັນວາ 2015

| *ລະຫັດ* | *ໜີ້ສິນ ແລະ ທຶນ* | *ບົດ ອະທິບາຍ ເລກທີ* | *31 ທັນວາ 2015 ລ້ານກີບ* |
|---|---|---|---|
| **I** | **ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ** | | **437,400** |
| 1 | ເງິນຝາກກະແສລາຍວັນຈາກທະນາຄານອື່ນ | 17.1 | 30,000 |
| 2 | ທຶນກູ້ຢືມ | 17.2 | 407,400 |
| **II** | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | **18** | **73,092** |
| 1 | ເງິນຝາກກະແສລາຍວັນ | | 51,676 |
| 2 | ເງິນຝາກປະຢັດ | | 18,183 |
| 3 | ເງິນຝາກມີກຳນົດ | | 3,233 |
| **III** | **ໜີ້ສິນອື່ນໆ** | | **50,972** |
| 1 | ດອກເບ້ຍຄ້າງຈ່າຍ | | 1,416 |
| 2 | ໜີ້ຕ້ອງສົ່ງອາກອນ | 20 | 180 |
| 3 | ໜີ້ຕ້ອງສົ່ງອື່ນໆ | 19 | 49,556 |
| | **ລວມຍອດໜີ້ສິນ** | | **561,464** |
| **IV** | **ທຶນຕົນເອງ ແລະ ຄັງສຳຮອງ** | | |
| 1 | ທຶນຈົດທະບຽນຖອກແລ້ວ | 21 | 405,100 |
| 2 | ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ | 13.2 | 979 |
| 3 | ຂາດທຶນສະສົມ | | (14,105) |
| | **ລວມຍອດທຶນ** | | **391,974** |
| | **ລວມຍອດໜີ້ສິນ ແລະ ທຶນ** | | **953,438** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການບໍລິຫານການເງິນ ແລະ ໜ່ວຍບໍລິການການດຳເນີນງານ

ອະນຸມັດໂດຍ:

ທ່ານ Li Zhiyong
ຜູ້ຈັດການທົ່ວໄປ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2016

# ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານສ່ວນປ່ຽນແປງທຶນຕົນເອງ
ສຳລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ 31 ທັນວາ 2015

| *ລາຍການ* | *ທຶນຈົດທະບຽນທີ່ຖອກແລ້ວ ລ້ານກີບ* | *ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ ລ້ານກີບ* | *ຂາດທຶນສະສົມ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|---|
| ນະວັນທີ 26 ມີນາ 2015 | - | - | - | - |
| ທຶນຈົດທະບຽນເພີ່ມພາຍໃນໄລຍະ | 405,100 | - | - | 405,100 |
| ຂາດທຶນສຸດທິພາຍໃນໄລຍະ | - | - | (14,105) | (14,105) |
| ລາຍຈ່າຍເງິນແຮທົ່ວໄປພາຍໃນໄລຍະ | - | 1,468 | - | 1,468 |
| ເກັບຄືນລາຍຈ່າຍເງິນແຮທົ່ວໄປພາຍໃນໄລຍະ | - | (489) | - | (489) |
| **ຍອດເຫຼືອນະ ວັນທີ 31 ທັນວາ 2015** | **405,100** | **979** | **(14,105)** | **391,974** |

ກະກຽມໂດຍ

ທ່ານ Li Zhiwei
ຜູ້ຈັດການບໍລິຫານການເງິນ ແລະ ໜ່ວຍບໍລິການການດຳເນີນງານ

ອະນຸມັດໂດຍ:

ທ່ານ Li Zhiyong
ຜູ້ຈັດການທົ່ວໄປ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2016

## ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ

ໃບລາຍງານກະແສເງິນສົດ
ສຳລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ 31 ທັນວາ 2015

| *ລາຍການ* | *ບົດອະທິບາຍເລກທີ* | *ສຳລັບໄລຍະ ແຕ່ 26 ມີນາ 2015 ເຖິງ 31 ທັນວາ 2015 ລ້ານກີບ* |
|---|---|---|
| **ຂາດທຶນສຸດທິກ່ອນອາກອນ** | | **(14,105)** |
| *ດັດແກ້ສຳລັບ:* | | |
| ລາຍຈ່າຍຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມ | | 3,291 |
| ລາຍຈ່າຍເງິນແຮສຳລັບໜີ້ເສຍເງິນກູ້ | 13.2 | 979 |
| **ກະແສເງິນສົດໄຫຼອອກກ່ອນການປ່ຽນແປງຂອງຊັບສິນ ແລະ ໜີ້ສິນ** | | **(9,835)** |
| (ເພີ່ມຂຶ້ນ)/ຫຼຸດລົງຂອງຊັບສິນຈາກການດຳເນີນງານ | | |
| ຍອດເຫຼືອທີ່ມີກັບທະນາຄານອື່ນ | | (32,365) |
| ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | | (97,888) |
| ລາຍຮັບດອກເບ້ຍຄ້າງຮັບ | | (4,198) |
| ຊັບສິນອື່ນໆ | | (427,069) |
| ເພີ່ມຂຶ້ນ/(ຫຼຸດລົງ)ຂອງໜີ້ສິນຈາກການດຳເນີນງານ | | |
| ເງິນຝາກ ແລະ ເງິນກູ້ຢືມຈາກທະນາຄານອື່ນ | | 437,400 |
| ເງິນຝາກລູກຄ້າ ແລະ ມູນຄ່າອື່ນໆທີ່ຕ້ອງສົ່ງໃຫ້ລູກຄ້າ | | 73,092 |
| ດອກເບ້ຍຄ້າງຈ່າຍ | | 1,416 |
| ໜີ້ສິນອື່ນໆ | | 49,556 |
| **ກະແສເງິນສົດສຸດທິໃຊ້ເຂົ້າໃນກິດຈະກຳການດຳເນີນງານ** | | **(9,891)** |
| **ກະແສເງິນສົດຈາກກິດຈະກຳການລົງທຶນ** | | |
| ລາຍຈ່າຍເພື່ອຊື້ຊັບສົມບັດຄົງທີ່ ແລະ ອຸປະກອນ | | (17,676) |
| **ກະແສເງິນສົດສຸດທິໃຊ້ເຂົ້າໃນກິດຈະກຳການລົງທຶນ** | | **(17,676)** |
| **ກະແສເງິນສົດຈາກກິດຈະກຳທາງການເງິນ** | | |
| ການປະກອບທຶນ | | 405,100 |
| **ກະແສເງິນສົດສຸດທິຈາກກິດຈະກຳທາງການເງິນ** | | **405,100** |
| **ເພີ່ມຂຶ້ນສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ** | | **377,533** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນໄລຍະ** | | **-** |
| **ຜົນກະທົບຈາກສ່ວນຜິດດ່ຽງຈາກການແລກປ່ຽນເງິນຕາຕ່າງປະເທດ** | | **-** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍໄລຍະ** | **22** | **377,533** |

ກະກຽມໂດຍ:

ທ່ານ Li Zhiwei
ຜູ້ຈັດການບໍລິຫານການເງິນ ແລະ ໜ່ວຍບໍລິການ ການດຳເນີນງານ

ອະນຸມັດໂດຍ:

ທ່ານ Li Zhiyong
ຜູ້ຈັດການທົ່ວໄປ

ນະຄອນຫຼວງວຽງຈັນ, ສປປ ລາວ
31 ມີນາ 2016

## 1. ຂໍ້ມູນກ່ຽວກັບທະນາຄານ

*ການສ້າງຕັ້ງ ແລະ ການດຳເນີນທຸລະກິດ*

ທະນາຄານແຫ່ງປະເທດຈີນ ຈຳກັດ, ສາຂາ ນະຄອນຫຼວງວຽງຈັນ ("ສາຂາ") ແມ່ນສາຂາຂອງ ທະນາຄານແຫ່ງປະເທດຈີນ ຈຳກັດ ທີ່ໄດ້ສ້າງຕັ້ງຂຶ້ນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ"). ສາຂາດຳເນີນທຸລະກິດພາຍໃຕ້ ໃບອະນຸຍາດດຳເນີນທຸລະກິດທະນາຄານ ສະບັບເລກທີ 06/ທຫລ ເຊິ່ງອອກໃຫ້ໂດຍ ທະນາຄານ ແຫ່ງ ສປປລາວ ("ທຫລ") ລົງວັນທີ 19 ກຸມພາ 2015.

ການເຄື່ອນໄຫວຕົ້ນຕໍຂອງທະນາຄານ ແມ່ນໃຫ້ບໍລິການລະດົມທຶນ ແລະ ຕອບສະໜອງເງິນກູ້ເພື່ອປັບປຸງ ແລະ ສ້າງຄວາມເຂັ້ມແຂງໃຫ້ເສດຖະກິດຂອງລາວ.

**ທຶນຈົດທະບຽນ**

ທຶນຈົດທະບຽນໃນເບື້ອງຕົ້ນຂອງສາຂາແມ່ນ 405,100,000,000 ກີບ. ນະວັນທີ 31 ທັນວາ 2015, ທຶນຈົດທະບຽນທີ່ຖອກແລ້ວຂອງທະນາຄານແມ່ນ 405,100,000,000 ກີບ.

**ຄະນະບໍລິຫານ**

ສະມາຊິກຂອງຄະນະບໍລິຫານ ໃນໄລຍະແຕ່ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015 ແລະ ນະວັນທີ ຂອງເອກະສານລາຍງານການເງິນສະບັບນີ້ ລວມມີ:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ Li Zhiyong | ຜູ້ຈັດການທົ່ວໄປ | ແຕ່ງຕັ້ງ ວັນທີ 26 ມີນາ 2015 |

*ທີ່ຕັ້ງ*

ສາຂາຕັ້ງຢູ່ຕຶກ ວຽງຈັນ ເຊັນເຕີ, ຖະໜົນຄູວຽງ, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

*ພະນັກງານ*

ນະວັນທີ 31 ທັນວາ 2015 ພະນັກງານຢູ່ສາຂາ ມີທັງໝົດ 20 ຄົນ.

## 2. ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ

ນະໂຍບາຍທາງການບັນຊີທີ່ສຳຄັນທີ່ໄດ້ນຳໃຊ້ເຂົ້າໃນການກະກຽມເອກະສານລາຍງານການເງິນ ມີດັ່ງນີ້:

### 2.1. *ຄຳຖະແຫຼງການຄວາມສອດຄ່ອງ*

ຄະນະບໍລິຫານຂອງສາຂາ ຂໍຢັ້ງຢືນວ່າໄດ້ກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບກົດໝາຍບັນຊີ ຂອງ ສປປ ລາວ ແລະ ກົດລະບຽບທີ່ວາງອອກໂດຍ ທຫລ ທີ່ກ່ຽວຂ້ອງກັບການສ້າງ ແລະ ນຳສະເໜີເອກະສານທາງການເງິນ.

### 2.2. *ພື້ນຖານການກະກຽມ*

ສາຂາ ໄດ້ກະກຽມເອກະສານລາຍງານການເງິນ ເປັນຫົວໜ່ວຍລ້ານກີບ ຕາມດຳລັດ ເລກທີ 02/ນຍ ໂດຍນາຍົກລັດຖະມົນຕີແຫ່ງ ສປປ ລາວ ໃນວັນທີ 22 ມີນາ 2000 ແລະ ກົດໝາຍການບັນບັນຊີຂອງ ສປປ ລາວ ແລະ ລະບຽບການບັນຊີອື່ນໆໄດ້ກຳນົດໂດຍ ທຫລ ທີ່ກ່ຽວຂ້ອງກັບການສ້າງ ແລະ ນຳສະເໜີເອກະສານລາຍງານການເງິນ.

ເອກະສານລາຍງານການເງິນສະບັບນີ້ໄດ້ຖືກກະກຽມໂດຍນຳໃຊ້ ຫຼັກການບັນຊີ, ຂັ້ນຕອນ ແລະ ການລາຍງານທາງການບັນຊີທີ່ຖືກ ຍອມຮັບທົ່ວໆໄປໃນ ສປປ ລາວ. ດັ່ງນັ້ນ, ໃບລາຍງານຜົນໄດ້ຮັບ,ໃບສະຫຼຸບຊັບສິນບັດ,ໃບລາຍງານສ່ວນປ່ຽນແປງຂອງທຶນຕົນເອງ, ໃບລາຍງານກະແສເງິນສົດ ແລະ ບົດອະທິບາຍຊ້ອນທ້າຍໃນເອກະສານລາຍງານການເງິນ ແມ່ນບໍ່ໄດ້ສ້າງຂຶ້ນສຳລັບທ່ານທີ່ບໍ່ຮູ້ຫຼັກການບັນຊີ, ຂັ້ນຕອນ ແລະ ການປະຕິບັດການບັນຊີຂອງລາວ, ນອກຈາກນັ້ນ ເອກະສານລາຍງານສະບັບນີ້ບໍ່ມີຈຸດປະສົງເພື່ອນຳສະເໜີຖານະການເງິນຂອງສາຂາ ຜົນຂອງການດຳເນີນງານ ແລະ ກະແສເງິນສົດອີງຕາມຫຼັກການບັນຊີ ແລະ ການປະຕິບັດການບັນຊີທີ່ຍອມຮັບທົ່ວໆໄປໃນປະເທດອື່ນນອກຈາກ ສປປ ລາວ.

### 2.3. *ປີການບັນຊີ*

ປີການບັນຊີຂອງສາຂາແມ່ນ ເລີ່ມແຕ່ວັນທີ 26 ມີນາ 2015 (ມື້ສ້າງຕັ້ງ) ແລະ ສິ້ນສຸດນະວັນທີ 31 ທັນວາ 2015.

ປີການບັນຊີຕໍ່ມາຂອງສາຂາແມ່ນ ເລີ່ມຈາກວັນທີ 1 ມັງກອນ ແລະ ສິ້ນສຸດ ວັນທີ 31 ທັນວາ.

### 2.4. *ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ*

ລາຍຮັບ ແລະ ລາຍຈ່າຍດອກເບ້ຍແມ່ນຖືກຮັບຮູ້ຢູ່ໃນໃບລາຍງານຜົນໄດ້ຮັບ ອີງຕາມການຕັ້ງໜີ້ຄ້າງຮັບຄ້າງຈ່າຍ ໂດຍນຳໃຊ້ວິທີການຄິດໄລ່ແບບສະເໝີຕົວ ແລະ ອັດຕາດອກເບ້ຍແມ່ນໄດ້ຖືກກຳນົດໄວ້ໃນສັນຍາເງິນກູ້/ເງິນຝາກກັບລູກຄ້າ.

ການຮັບຮູ້ລາຍຮັບດອກເບ້ຍຄ້າງຮັບຈະຖືກຢຸດຕິກໍ່ຕໍ່ເມື່ອເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ທີ່ບໍ່ເກີດດອກອອກຜົນ (ບົດອະທິບາຍຊ້ອນທ້າຍເລກທີ 2.8 ຄວາມໝາຍຂອງເງິນກູ້ທີ່ບໍ່ເກີດດອກອອກຜົນ) ຫລື ເມື່ອຜູ້ບໍລິຫານເຊື່ອວ່າ ຜູ້ກູ້ຢືມແມ່ນບໍ່ມີຄວາມສາມາດຊຳລະຄືນດອກເບ້ຍ ແລະ ຕົ້ນທຶນໄດ້. ລາຍຮັບດອກເບ້ຍກ່ຽວກັບເງິນກູ້ແມ່ນໄດ້ຖືກບັນທຶກລົງໃນໃບລາຍງານຜົນໄດ້ຮັບເມື່ອໄດ້ຮັບເງິນຕົວຈິງ.

### 2.5. *ການຮັບຮູ້ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ*

ຄ່າທຳນຽມ ແລະ ຄ່າບໍລິການປະກອບດ້ວຍຄ່າທຳນຽມທີ່ໄດ້ຮັບຈາກການບໍລິການໂອນເງິນ (ລວມມີການຊຳລະການຄ້າ) ຄ່າທຳນຽມທີ່ເກີດຂຶ້ນຈາກທຸລະກິດເງິນກູ້.

ຄ່າທຳນຽມ ແລະ ຄ່າບໍລິການແມ່ນຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບບົນພື້ນຖານຫລັກການເງິນສົດ.

## 2. ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.6. ເງິນສົດ ແລະ ທຽບເທົ່າເງິນສົດ*

ເງິນສົດ ແລະ ທຽບເທົ່າເງິນສົດແມ່ນລວມມີເງິນສົດ ແລະ ການລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງ ໂດຍມີອາຍຸຄົບກຳນົດຕ່ຳກວ່າ 30 ວັນ ເຊິ່ງພ້ອມທີ່ຈະປ່ຽນເປັນເງິນສົດໄດ້ ແລະ ບັນຊີໜີ້ຕ້ອງຮັບຈາກທະນາຄານອື່ນທີ່ມີອາຍຸຄົບກຳນົດຕ່ຳກວ່າ ຫຼື ເທົ່າກັບ 30 ວັນ.

### *2.7. ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ*

ເງິນກູ້ໃຫ້ລູກຄ້າແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ສະແດງຍອດຄ້າງຊຳລະລົບໃຫ້ເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ.

### *2.8. ເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ*

ອີງຕາມຂໍ້ຕົກລົງ ເລກທີ 324/ທຫລ (ທຫລ 324) ລົງວັນທີ 19 ເມສາ 2011, ທະນາຄານຕ້ອງໄດ້ຈັດຊັ້ນເງິນກູ້ ແລະ ຫັກເງິນແຮສຳລັບຄ່າເຊື່ອມມູນຄ່າຂອງເງິນກູ້ດັ່ງນັ້ນ, ເງິນກູ້ແມ່ນຖືກຈັດຊັ້ນເປັນເງິນກູ້ທີ່ເກີດດອກອອກຜົນ ຫລື ເງິນກູ້ທີ່ບໍ່ເກີດດອກອອກຜົນ ອີງຕາມສະຖານະພາບການຊຳລະເງິນທີ່ຍັງຄົງຄ້າງ ແລະ ປັດໃຈທາງດ້ານຄຸນນະພາບອື່ນໆ. ເງິນກູ້ຖືກຈັດຊັ້ນກຸ່ມ (A) ເປັນໜີ້ປົກກະຕິ; ກຸ່ມ (B) ເປັນໜີ້ຄວນເອົາໃຈໃສ່; ແມ່ນຈະຖືກພິຈາລະນາເງິນກູ້ທີ່ເກີດດອກອອກຜົນ, ເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ຕ່ຳກ່ວາມາດຕະຖານ ກຸ່ມ (C) ຫຼື ໜີ້ສົງໃສ ກຸ່ມ (D) ຫຼື ກຸ່ມ (E) ແມ່ນໜີ້ສູນແມ່ນຈະຖືກພິຈາລະນາເປັນເງິນກູ້ທີ່ບໍ່ເກີດດອກອອກຜົນ ຫຼື ໜີ້ຕ້ອງຮັບທວງຍາກ.

ອີງຕາມຂໍ້ຕົກລົງ ເລກທີ 324/ທຫລ ເງິນແຮສຳລັບເງິນກູ້ທີ່ເປັນໜີ້ຕ້ອງຮັບທວງຍາກ ແມ່ນໄດ້ຖືກກຳນົດໂດຍການຄິດໄລ່ເອົາຍອດເຫລືອຄ້າງຊຳລະເງິນກູ້ແຕ່ລະລາຍການຄູນໃຫ້ອັດຕາເງິນແຮທີ່ເໝາະສຳລັບການຈັດຊັ້ນເງິນກູ້ນັ້ນໆ ຄືດັ່ງລຸ່ມນີ້:

| *ລຳດັບ* | *ປະເພດ* | *ອັດຕາເງິນແຮສະເພາະ* |
|---|---|---|
| 1 | ໜີ້ຕ່ຳກວ່າມາດຕະຖານ | 20% |
| 2 | ໜີ້ສົງໃສ | 50% |
| 3 | ໜີ້ສູນ | 100% |

ສ່ວນປ່ຽນແປງຂອງເງິນແຮດັ່ງກາວ ແມ່ນຈະໄດ້ຖືກບັນທຶກຢູ່ໃນໃບລາຍງານຜົນໄດ້ຮັບເປັນ "ລາຍຈ່າຍເງິນແຮຄ່າເຊື່ອມໜີ້ຕ້ອງຮັບທວງຍາກ" ຫຼື ເກັບຄືນເງິນແຮຄ່າເຊື່ອມໜີ້ຕ້ອງຮັບທວງຍາກ. ເງິນແຮສຳລັບເງິນກູ້ທີ່ເປັນໜີ້ຕ້ອງຮັບທວງຍາກສະສົມ ແມ່ນຈະຖືກບັນທຶກລົງໃນໃບສະຫລຸບຊັບສົມບັດໃນ " ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ (ຫຼັງຫັກເງິນແຮສຳລັບເງິນກູ້ທີ່ເປັນໜີ້ຕ້ອງຮັບທວງຍາກ).

ລາຍລະອຽດກ່ຽວກັບການຈັດຊັ້ນໜີ້ ແລະ ເງິນແຮສຳລັບເງິນກູ້ທີ່ເປັນໜີ້ຕ້ອງຮັບທວງຍາກ ແລະ ມູນຄ່າຂອງເງິນແຮທີ່ບັນທຶກຕົວຈິງໂດຍທະນາຄານ ນະວັນທີ 31 ທັນວາ 2015 ແມ່ນໄດ້ລະບຸຢູ່ໃນເອກະສານຊ້ອນທ້າຍ 13.2.

### *2.9. ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ*

ອີງຕາມ ທຫລ 324 ສາຂາຕ້ອງຫັກເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມ ໃນອັດຕາ 3.00 % ຂອງຍອດເຫຼືອເງິນກູ້ທີ່ຖືກຈັດຊັ້ນເປັນປະເພດໜີ້ຄວນເອົາໃຈໃສ່ ນະວັນທີສ້າງໃບສະຫລຸບຊັບສົມບັດ ແລະ ຕ້ອງຫັກເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມສຳລັບເງິນກູ້ທີ່ຖືກຈັດປະເພດເປັນ ໜີ້ປົກກະຕິ ແມ່ນອີງຕາມການແຈ້ງການຂອງທະນາຄານ ແຫ່ງ ສປປ ລາວ ທີ່ແຈ້ງອອກໃນແຕ່ລະປີ. ສຳລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015, ອັດຕາເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມ, ສຳລັບເງິນກູ້ທີ່ຈັດເປັນປະເພດ ໜີ້ປົກກະຕິ ແມ່ນຢູ່ໃນລະຫວ່າງ 0.5 % ຫາ 1.00 % ອີງຕາມນັງສືທາງການ ເລກທີ 242 / ທຫລ ອອກໂດຍ ທະນາຄານແຫ່ງ ສປປ ລາວ, ລົງວັນທີ 02 ເມສາ 2011 ອີງຕາມຂໍ້ຕົກລົງດັ່ງກ່າວ ທະນາຄານໄດ້ກຳນົດອັດຕາເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມແມ່ນ 1.00 % ຂອງຍອດເຫຼືອຂອງໜີ້ປົກກະຕິ.

## 2. ສະຫຼຸບນະໂຍບາຍທາງການບັນຊີທີ່ສຳຄັນ (ຕໍ່)

### *2.9. ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ (ຕໍ່)*

ສາຂາໄດ້ປະຕິບັດຕາມຂໍ້ຕົກລົງຂ້າງເທິງຂອງ ທະນາຄານແຫ່ງ ສປປ ລາວ ໃນການຫັກເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມ ສຳລັບໜີ້ປົກກະຕິ ແລະ ໜີ້ຄວນເອົາໃຈໃສ່ ສຳລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ 31 ທັນວາ 2015

ອີງຕາມກົດລະບຽບບັນຊີທີ່ກ່ຽວຂ້ອງ ເຊິ່ງວາງອອກໂດຍ ທະນາຄານ ແຫ່ງ ສປປ ລາວ, ສ່ວນປ່ຽນແປງຂອງເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມ ແມ່ນຈະບັນທຶກລົງໃນໃບລາຍຜົນໄດ້ຮັບສະເພາະກິດຈະການສ່ວນເພີ່ມຂຶ້ນຂອງເງິນແຮຈະຖືກບັນທຶກເປັນ " ລາຍຈ່າຍອື່ນໆຈາການດຳເນີນງານ " ແລະ ການຫຼຸດລົງຂອງເງິນແຮດັ່ງກ່າວຈະຖືກບັນທຶກເປັນ " ລາຍຮັບອື່ນໆຈາການດຳເນີນງານ " ແລະ ຍອດເຫຼືອເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມຈະຖືກບັນທຶກຢູ່ໃນໃບສະຫຼຸບຊັບສິນບັດສະເພາະກິດຈະການເປັນ "ເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມ" ພາຍໃຕ້ພາກສ່ວນຂອງທຶນ ແລະ ຄັງສຳຮອງຕ່າງໆຂອງສາຂາ.

ລາຍລະອຽດຂອງການປ່ຽນແປງເງິນແຮຂອງໜີ້ທີ່ຖືກຈັດຊັ້ນຂອງເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມ ແມ່ນສະແດງຢູ່ໃນບົດອະທິບາຍຊ້ອນທ້າຍ ເລກທີ 13.2.

### *2.10. ຊັບສິນບັດຄົງທີ່*

ຊັບສິນບັດຄົງທີ່ ລວມມີ ຊັບສິນບັດຄົງທີ່ທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ. ຊັບສິນບັດຄົງທີ່ມີຕົວຕົນປະກອບມີ ເຄື່ອງໃຊ້ຫ້ອງການ, ເຄື່ອງເຟີນີເຈີ ແລະ ເຄື່ອງຕົບແຕ່ງການປັບປຸງອາຄານ, ແລະ ພາຫະນະ. ຊັບສິນບັດຄົງທີ່ບໍ່ມີຕົວຕົນປະກອບມີຄອມພິວເຕີ ຊັອບແວ

ຊັບສິນບັດຄົງ ແມ່ນສະແດງຕາມມູນຄ່າຕົ້ນທຶນ ລົບໃຫ້ ຄ່າຫລຸ້ຍຫ້ຽນສະສົມ; ຖ້າມີ.

ຕົ້ນທຶນຂອງຊັບສິນບັດຕ່າກັນໂດຍປະກອບດ້ວຍ ມູນຄ່າຊື້ບວກກັບ ຄ່າໃຊ້ຈ່າຍທີ່ຕິດເພື່ອການເຮັດໃຫ້ຊັບສິນບັດຄົງທີ່ສາມາດນຳໃຊ້ໄດ້.

ລາຍຈ່າຍສຳລັບການຊື້ເພີ່ມເຕີມ, ການປັບປຸງ ແລະ ການຕໍ່ອາຍຸ ແມ່ນຈະຖືກຕີເປັນຕົ້ນທຶນ ແລະ ຄ່າໃຊ້ຈ່າຍ ສຳລັບການບຳລຸງຮັກສາ ແລະ ຄ່າສ້ອມແປງແມ່ນຈະຖືກບັນທຶກຢູ່ໃນໃບລາຍງານຜົນໄດ້ຮັບ.

ເມື່ອຊັບສິນບັດຖືກຂາຍ ຫຼື ໝົດອາຍຸ, ຕົ້ນທຶນ ແລະ ຄ່າຫລຸ້ຍຫ້ຽນສະສົມຈະຖືກສະສາງ ຈາກໃບສະຫລຸບຊັບສິນບັດ ແລະ ກຳໄລ ຫລື ຂາດທຶນທີ່ມາຈາກການຂາຍອອກທີ່ຖືກບັນທຶກຢູ່ໃນ ໃບລາຍງານຜົນໄດ້ຮັບ.

## 2. ສະຫຼຸບນະໂຍບາຍທາງການບັນຊີທີ່ສຳຄັນ (ຕໍ່)

### *2.11. ຄ່າຫລຸ້ຍຫ້ຽນ ແລະ ຄ່າເຊື່ອມຂອງຊັບສິນບັດຄົງທີ່*

ຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມຂອງຊັບສິນບັດຄົງທີ່ ແມ່ນຖືກຄິດໄລ່ຕາມວິທີຄິດໄລ່ແບບເສັ້ນຊື່ ໃນອັດຕາທີ່ກຳນົດໃຊ້ຕໍ່ອາຍຸການນຳໃຊ້ທີ່ຄາດຄະເນຂອງຊັບສິນບັດເຫຼົ່ານັ້ນ. ອັດຕາໃຊ້ການຫັກຄ່າຫຼູ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າປະຈຳປີ ມີດັ່ງນີ້:

| | |
|---|---|
| *ຊັບສິນບັດຄົງທີ່ມີຕົວຕົນ:* | |
| ອາຄານ ແລະ ການປັບປຸງອາຄານ | 20% |
| ເຟີນິເຈີ ແລະ ເຄື່ອງຕົບແຕ່ງ | 20% |
| ອຸປະກອນ ຄອມພິວເຕີ | 33% |
| ພາຫະນະ | 20% |
| *ຊັບສິນບັດຄົງທີ່ບໍ່ມີຕົວຕົນ* | |
| ຄ່າໃຊ້ຈ່າຍກ່ອນການສ້າງຕັ້ງວິສາຫະກິດ | 50% |

### *2.12. ຄັງສຳຮອງ*

ພາຍໃຕ້ຂໍ້ກຳນົດຂອງກົດໝາຍວ່າດ້ວຍ ທະນາຄານທຸລະກິດ ລົງວັນທີ 16 ມັງກອນ 2007, ບັນດາທະນາຄານທຸລະກິດຕ້ອງໄດ້ແບ່ງຜົນກຳໄລສຸດທິເພື່ອນຳໄປສ້າງຄັງສຳຮອງຕາມລະບຽບການ ດັ່ງລຸ່ມນີ້:

- ຄັງສຳຮອງຕາມລະບຽບການ
- ຄັງຂະຫຍາຍທຸລະກິດ ແລະ ກອງທຶນອື່ນໆ

ໂດຍອີງຕາມກົດລະບຽບກ່ຽວກັບຄວາມພຽງພໍຂອງທຶນເລກທີ 01/ທຫລ ລົງວັນທີ 28 ສິງຫາ 2011 ໂດຍຜູ້ວ່າການທະນາຄານແຫ່ງ ສປປ ລາວ ແລະ ຄຳແນະນຳໃນການຈັດຕັ້ງປະຕິບັດອື່ນໆ, ບັນດາທະນາຄານທຸລະກິດ ແມ່ນຕ້ອງໄດ້ສ້າງຄັງສຳຮອງຕາມລະບຽບການ ໃນອັດຕາລະຫວ່າງ 5% ຫາ 10% ຂອງກຳໄລຫລັງອາກອນ ໂດຍຂຶ້ນກັບການຕັດສິນໃຈຂອງຄະນະບໍລິຫານ. ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆຄວນຖືກສ້າງຂຶ້ນພາຍໃຕ້ການຕົກລົງຂອງຄະນະບໍລິຫານ. ເນື່ອງຈາກວ່າສາຂາມີການຂາດທຶນສະສົມ, ດັ່ງນັ້ນ ທະນາຄານບໍ່ໄດ້ສ້າງຄັງສຳຮອງຕາມລະບຽບການສະພາບໍລິຫານສຳລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ 31 ທັນວາ 2015.

2. **ສະຫຼຸບນະໂຍບາຍທາງການບັນຊີທີ່ສຳຄັນ** (ຕໍ່)

### *2.13. ລາຍການເຄື່ອນໄຫວທີ່ເປັນເງິນຕາຕ່າງປະເທດ*

ທະນາຄານໄດ້ປະຕິບັດລະບົບການບັນຊີ ແລະ ບັນທຶກທຸກລາຍການເຄື່ອນໄຫວຕາມສະກຸນເງິນເດີມ. ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນເງິນຕາຕ່າງປະເທດ ໃນທ້າຍປີແມ່ນໄດ້ຖືກຕີມູນຄ່າເປັນເງິນກີບຕາມອັດຕາແລກປ່ຽນໃນມື້ປິດບັນຊີ. (ລາຍລະອຽດອັດຕາແລກປ່ຽນເງິນຕາຕ່າງປະເທດທຽບໃສ່ເງິນກີບໃນວັນທີ 31 ທັນວາ 2015 ໄດ້ສະແດງຢູ່ຂ້າງລຸ່ມນີ້). ລາຍຮັບ ແລະ ລາຍຈ່າຍທີ່ເກີດຈາກການແລກປ່ຽນເງິນຕາຕ່າງປະເທດພາຍໃນປີແມ່ນຖືກປ່ຽນເປັນເງິນກີບໃນທຸກເດືອນດ້ວຍອັດຕາແລກປ່ຽນສະເລ່ຍໃນເດືອນ. ສ່ວນຜິດດ່ຽງເງິນຕາຕ່າງປະເທດທີ່ເກີດຈາກ ການຕີມູນຄ່າຊັບສິນ ແລະ ໜີ້ສິນ ທາງການເງິນໃນມື້ປິດບັນຊີ ຖືກບັນທຶກເຂົ້າໃນ ໃບລາຍງານຜົນໄດ້ຮັບ.

| | *31 ທັນວາ 2015*<br>*ກີບ* |
|---|---|
| ໂດລາສະຫະລັດ ("USD") | 8,148 |
| ບາດໄທ ("THB") | 225.96 |
| ຢວນຈີນ ("CNY") | 1,236 |

### *2.14. ອາກອນ*

ການຄິດໄລ່ເງິນແຮສຳລັບເສຍອາກອນແມ່ນອີງຕາມກຳໄລພາຍໃນປີປະຈຸບັນໂດຍອີງຕາມ ກົດໝາຍສ່ວຍສາອາກອນວ່າດ້ວຍການເກັບອາກອນພາຍໃນ ສປປ ລາວ. ທະນາຄານ ມີພັນທະຕ້ອງຈ່າຍອາກອນໃນອັດຕາ 24% ຂອງກຳໄລທັງໝົດກ່ອນຫັກອາກອນອີງຕາມ ກົດໝາຍສ່ວຍອາກອນສະບັບໃໝ່ ເລກທີ 05 ລົງວັນທີ 20 ທັນວາ 2011 ເຊິ່ງມີຜົນສັກສິດພາຍຫຼັງ ວັນທີ 1 ມັງກອນ 2013. ການແຈ້ງອາກອນຂອງທະນາຄານຕ້ອງໄດ້ຮັບການກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ, ເນື່ອງຈາກວ່າກົດໝາຍສ່ວຍສາອາກອນ ແລະ ລະບຽບການຕ່າງໆໄດ້ຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດເຊິ່ງອາດຈະຕີຄວາມໝາຍທີ່ແຕກຕ່າງກັນ,ຈຳນວນທີ່ໄດ້ຖືກລາຍງານຢູ່ໃນເອກະສານລາຍງານການເງິນອາດຈະມີການປ່ຽນແປງຂຶ້ນກັບການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

### *2.15. ຜົນປະໂຫຍດຂອງພະນັກງານ*

*ຜົນປະໂຫຍດຫລັງການຈ້າງງານ*

ຜົນປະໂຫຍດຫລັງການຈ້າງງານໄດ້ຖືກຈ່າຍໃຫ້ພະນັກງານທີ່ອອກແລ້ວຂອງສາຂາ ໂດຍກອງທຶນສະຫວັດດີການສັງຄົມ. ທາງສາຂາໄດ້ຈ່າຍຄ່າປະກັນສັງຄົມໃຫ້ແກ່ຕົວແທນປະກັນສັງຄົມໃນອັດຕາ 4.00% ຂອງເງິນເດືອນພື້ນຖານຂອງພະນັກງານແຕ່ລະເດືອນ. ສາຂາຈະບໍ່ມີພັນທະອື່ນກ່ຽວກັບຜົນປະໂຫຍດຫລັງການຈ້າງງານ.

**2. ສະຫຼຸບນະໂຍບາຍທາງການບັນຊີທີ່ສຳຄັນ** (ຕໍ່)

***2.15. ຜົນປະໂຫຍດຂອງພະນັກງານ*** (ຕໍ່)

*ຜົນປະໂຫຍດເມື່ອອອກການ*

ອີງຕາມມາດຕາ 82 ຂອງກົດໝາຍແຮງງານ ອອກໂດຍປະທານປະເທດ ແຫ່ງ ສປປ ລາວ, ສະບັບເລກທີ 43/ສພຊ ລົງວັນທີ 28 ມັງກອນ 2014, ສາຂາ ມີພັນທະຈ່າຍເງິນຊົດເຊີຍໃຫ້ແກ່ພະນັກງານຜູ່ທີ່ລາອອກ ອີງຕາມລາຍ ລະອຽດລຸ່ມນີ້:

- ກໍລະນີພະນັກງານຂາດທັກສະຄວາມຊຳນິຊຳນານ ຫລື ມີສຸຂະພາບບໍ່ດີ ແລະ ບໍ່ສາມາດສືບຕໍ່ເຮັດວຽກໄດ້;
- ກໍລະນີສາຂາ ພິຈາລະນາວ່າຈຳເປັນຕ້ອງຫລຸດພະນັກງານ ເພື່ອປັບປຸງອີງການຈັດຕັ້ງຂອງການເຮັດວຽກໃນໜ່ວຍງານແຮງງານ.

ສຳລັບຜົນປະໂຫຍດຂອງພະນັກງານທີ່ເກີດຈາກ 2 ກໍລະນີທີ່ໄດ້ກ່າວມາຂ້າງເທິງນັ້ນ, ສາຂາ ຕ້ອງໄດ້ຈ່າຍເງິນຊົດເຊີຍໃຫ້ພະນັກງານ ໂດຍຄິດໄລ່ໃນອັດຕາ 10% ຂອງເງິນເດືອນພື້ນຖານຂອງພະນັກງານທີ່ຖືກໄລ່ອອກ ໄດ້ຮັບກ່ອນອອກວຽກ. ນະວັນທີ 31 ທັນວາ 2015, ບໍ່ມີພະນັກງານສາຂາຖືກໄລ່ອອກຍ້ອນສາເຫດຂ້າງເທິງ, ດັ່ງນັ້ນ, ສາຂາຈຶ່ງບໍ່ໄດ້ຄິດໄລ່ລາຍຈ່າຍສ່ວນນີ້ໄວ້ໃນເອກະສານລາຍງານການເງິນ ຂອງສາຂາ.

**3. ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ**

| | *ສຳລັບໄລຍະ ແຕ່ 26 ມີນາ 2015 ເຖິງ 31 ທັນວາ 2015 ລ້ານກີບ* |
|---|---|
| **ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນຈາກ:** | |
| ທຸລະກຳລະຫວ່າງທະນາຄານ | 17 |
| ເງິນກູ້ໃຫ້ລູກຄ້າ | 2,611 |
| ການລົງທຶນໃນຫຼັກຊັບຖືໄວ້ຈົນຄົບກຳນົດ | 3,925 |
| | **6,553** |
| **ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍຄ້າຍຄືດອກເບ້ຍສຳລັບ:** | |
| ທຸລະກຳລະຫວ່າງລະນາຄານ | (1,378) |
| ເງິນຝາກຂອງລູກຄ້າ | (127) |
| | **(1,505)** |
| **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **5,048** |

**4. ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ**

| | *ສຳລັບໄລຍະ ແຕ່ 26 ມີນາ 2015 ເຖິງ 31 ທັນວາ 2015 ລ້ານກີບ* |
|---|---|
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ:** | |
| ຄ່າບໍລິການຊຳລະສະສາງ | 178 |
| ອື່ນໆ | 2 |
| | **180** |

**5. ກຳໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ**

| | *ສຳລັບໄລຍະ ແຕ່ 26 ມີນາ 2015 ເຖິງ 31 ທັນວາ 2015 ລ້ານກີບ* |
|---|---|
| ກຳໄລຈາກສ່ວນຕ່າງການຊື້ຂາຍເງິນຕາຕ່າງປະເທດ | 404 |
| ຂາດທຶນຈາກສ່ວນຕ່າງການຊື້ຂາຍເງິນຕາຕ່າງປະເທດ | (10) |
| | **394** |

## 6. ເງິນເດືອນ ແລະ ລາຍຈ່າຍອື່ນໆກ່ຽວກັບພະນັກງານ

| | *ສຳລັບໄລຍະ ແຕ່ 26 ມີນາ 2015 ເຖິງ 31 ທັນວາ 2015 ລ້ານກີບ* |
|---|---|
| ຄ່າແຮງງານ ແລະ ເບັ້ຍລ້ຽງ | 6,473 |
| ລາຍຈ່າຍອື່ນໆໃຫ້ພະນັກງານ | 603 |
| | **7,076** |

## 7. ລາຍຈ່າຍບໍລິຫານອື່ນໆ

| | *ສຳລັບໄລຍະ ແຕ່ 26 ມີນາ 2015 ເຖິງ 31 ທັນວາ 2015 ລ້ານກີບ* |
|---|---|
| ຄ່າເຊົ່າຫ້ອງການ | 2,184 |
| ຄ່າບໍລິການພາຍນອກ | 339 |
| ຄ່າສ້ອມແປງ ແລະ ບຳລຸງຮັກສາ | 66 |
| ຄ່າຕີພິມ, ການຕະຫຼາດ ແລະ ການສົ່ງເສີມການຂາຍ | 195 |
| ຄ່າໂທລະຄົມມະນາຄົມ | 716 |
| ຄ່າຝຶກອົບຮົມ, ປະຊຸມ ແລະ ສຳມະນາ | 3,496 |
| ຄ່ານ້ຳ ແລະ ຄ່າໄຟຟ້າ | 227 |
| ຄ່າກວດສອບ ແລະ ນັກກົດໝາຍ | 102 |
| ລາຍຈ່າຍອື່ນໆ | 999 |
| | **8,324** |

## 8. ລາຍຈ່າຍອື່ນໆໃນການດຳເນີນງານ

| | *ສຳລັບໄລຍະ ແຕ່ 26 ມີນາ 2015 ເຖິງ 31 ທັນວາ 2015 ລ້ານກີບ* |
|---|---|
| ເງິນແຮທົ່ວໄປສຳລັບເງິນກູ້ໃຫ້ລູກຄ້າ *(ບົດອະທິບາຍເລກທີ 13.2)* | 1,468 |
| | **1,468** |

## 9. ເງິນສົດໃນກໍາມື

| | *31 ທັນວາ 2015* |
|---|---|
| | *ລ້ານກີບ* |
| ເງິນສົດໃນກໍາມື ທີ່ເປັນສະກຸນເງິນກີບ | 1,486 |
| ເງິນສົດໃນກໍາມື ທີ່ເປັນສະກຸນເງິນຕາຕ່າງປະເທດ | 2,774 |
| | **4,260** |

## 10. ບັນຊີຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ")

| | *31 ທັນວາ 2015* |
|---|---|
| | *ລ້ານກີບ* |
| ເງິນຝາກກະແສລາຍວັນ | 335,498 |
| ເງິນຝາກພາກບັງຄັບ | 4,740 |
| ເງິນຝາກຄໍ້າປະກັນທຶນຈົດທະບຽນ | 27,625 |
| | **367,863** |

ເງິນຝາກກັບ ທຫລ ແມ່ນບໍ່ມີດອກເບ້ຍ.

ຕາມຂໍ້ກໍານົດຂອງ ທຫລ, ທະນາຄານໄດ້ຖືກຮຽກຮ້ອງ ໃຫ້ຮັກສາເງິນແຮເງິນສົດໄວ້ກັບທະນາຄານ ແຫ່ງ ສປປ ລາວ ໃນຮູບແບບເງິນຝາກພາກບັງຄັບເຊິ່ງ ຖືກຄິດໄລ່ ໃນອັດຕາ 5.00% ສໍາລັບເງິນກີບ ແລະ 10.00% ສໍາລັບສະກຸນເງິນຕາຕ່າງປະເທດ, ໃນທຸກໆ 2 ຄັ້ງຕໍ່ເດືອນ ຂອງຍອດເງິນຝາກລູກຄ້າທີ່ມີກໍານົດຕໍ່າກ່ວາ 12 ເດືອນ. ພາຍໃນປີ, ສາຂາໄດ້ຮັກສາເງິນຝາກພາກບັງຄັບ ເພື່ອໃຫ້ສອດຄ່ອງຕາມຂໍ້ກໍານົດ ຂອງທະນາຄານແຫ່ງ ສປປ ລາວ.

ອີງຕາມຂໍ້ຕົກລົງເລກທີ 02/PR ຂອງ ທຫລ, ສາຂາທະນາຄານຕ່າງປະເທດ ຕ້ອງຮັກສາຍອດເຫຼືອທຶນຕໍ່າສຸດຂອງເງິນຝາກພິເສດທີ່ ທຫລ ເຊິ່ງເທົ່າກັບ 25% ຂອງທຶນທີ່ຖອກແລ້ວ ເພື່ອຮັບປະກັນຄວາມສືບເນື່ອງໃນການດໍາເນີນງານ. ສາຂາຈະຖືກຮັບຮອງໂດຍຈົດໝາຍທາງການເພື່ອຖອນເງິນຈາກເງິນຝາກ ເພື່ອເພີ່ມທຶນດໍາເນີນງານ. ນະວັນທີ 31 ທັນວາ 2015, ຍອດເຫຼືອຂອງເງິນຝາກພິເສດແມ່ນ 27,625 ລ້ານກີບ.

## 11. ໜີ້ຕ້ອງຮັບຈາກທະນາຄານອື່ນ

| | *31 ທັນວາ 2015* |
|---|---|
| | *ລ້ານກີບ* |
| **ເງິນຝາກກັບທະນາຄານພາຍໃນປະເທດ** | |
| ທະນາຄານ ອຸດສະຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງວຽງຈັນ (ໄອຊີບີຊີ) | 984 |
| **ເງິນຝາກກັບທະນາຄານຕ່າງປະເທດ** | |
| ທະນາຄານແຫ່ງປະເທດຈີນ, ສາຂາຊຽງໄຮ້ | 6,019 |
| ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | 28,889 |
| ທະນາຄານແຫ່ງປະເທດຈີນ, ສາຂາແຟັງເຟີດ | 809 |
| ທະນາຄານແຫ່ງປະເທດຈີນ, ສາຂາໄທ | 1,074 |
| | **37,775** |

## 12. ລົງທຶນໃນຫຼັກຊັບ

| | *31 ທັນວາ 2015* |
|---|---|
| | *ລ້ານກີບ* |
| **ຫຼັກຊັບຖືໄວ້ຈົນຄົບກຳນົດ** | |
| ພັນທະບັດອອກໂດຍ ທຫລ | 407,400 |
| | **407,400** |

ພັນທະບັດອອກໂດຍ ທຫລ ມີໄລຍະເວລາ 5 ປີ ແລະ ມີດອກເບ້ຍໃນອັດຕາຄົງທີ່ 4.82% ຕໍ່ປີ.

## 13. ເງິນກູ້ໃຫ້ແກ່ລູກຄ້າຫຼັງຫັກເງິນແຮສໍາລັບເງິນກູ້ທີ່ບໍ່ເກີດດອກອອກຜົນ

| | *31 ທັນວາ 2015* *ລ້ານກີບ* |
|---|---|
| ເງິນກູ້ໃຫ້ແກ່ລູກຄ້າ (*ບົດອະທິບາຍເລກທີ 13.1*) | 97,888 |
| ລົບ ເງິນແຮສໍາລັບເງິນກູ້ບໍ່ເກີດດອກອອກຜົນ (*ບົດອະທິບາຍເລກທີ 13.2*) | - |
| | **97,888** |

| | *ສໍາລັບໄລຍະແຕ່ 26 ມີນາ 2015 ເຖິງ 31 ທັນວາ 2015 ອັດຕາດອກເບ້ຍ % ຕໍ່ປີ* |
|---|---|
| ເງິນກູ້ ທີ່ເປັນສະກຸນເງິນ ກີບ | 11% |
| ເງິນກູ້ ທີ່ເປັນສະກຸນເງິນ ໂດລາ | 7.04% |

### *13.1 ວິເຄາະເງິນກູ້ໃຫ້ລູກຄ້າ*

*ວິເຄາະຕາມສະກຸນເງິນ*

| | *31 ທັນວາ 2015* *ລ້ານກີບ* |
|---|---|
| ເງິນກູ້ ທີ່ເປັນສະກຸນເງິນ ກີບ | 48,888 |
| ເງິນກູ້ ທີ່ເປັນສະກຸນເງິນ ໂດລາ | 49,000 |
| | **97,888** |

*ວິເຄາະຕາມສະຖານະເງິນກູ້*

| | *31 ທັນວາ 2015* *ລ້ານກີບ* |
|---|---|
| ເງິນກູ້ທີ່ເກີດດອກອອກຜົນ | 97,888 |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ | - |
| | **97,888** |

## 13. ເງິນກູ້ໃຫ້ແກ່ລູກຄ້າຫຼັງຫັກເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ (ຕໍ່)

### *13.1 ວິເຄາະເງິນກູ້ໃຫ້ລູກຄ້າ (ຕໍ່)*

*ວິເຄາະຕາມໄລຍະເວລາເດີມ*

| | *31 ທັນວາ 2015* |
|---|---|
| | *ລ້ານກີບ* |
| ເງິນກູ້ໄລຍະສັ້ນ | - |
| ເງິນກູ້ໄລຍະກາງ | 97,888 |
| ເງິນກູ້ໄລຍະຍາວ | - |
| | **97,888** |

*ວິເຄາະຕາມພາກສ່ວນເສດຖະກິດ*

| | *31 ທັນວາ 2015* |
|---|---|
| | *ລ້ານກີບ* |
| ບໍລິສັດກໍ່ສ້າງ | 49,000 |
| ບໍລິສັດກະສິກຳ | 48,888 |
| | **97,888** |

### *13.2 ເງິນແຮສຳລັບໜີ້ເສຍ*

ການປ່ຽນແປງເງິນແຮສຳລັບໜີ້ເສຍຂອງສາຂາໃນໄລຍະແຕ່ວັນທີ 26 ມີນາ 2015 ເຖິງວັນທີ 31 ທັນວາ 2015 ມີດັ່ງນີ້:

| | *ເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ* | *ເງິນແຮທົ່ວໄປ* | *ລວມ* |
|---|---|---|---|
| | *ລ້ານກີບ* | *ລ້ານກີບ* | *ລ້ານກີບ* |
| **ນະວັນທີ 26 ມີນາ 2015** | - | - | - |
| ເງິນແຮທີ່ຫັກເປັນ ລາຍຈ່າຍໃນໄລຍະ | - | 1,468 | 1,468 |
| ເກັບຄືນເງິນແຮໃນໄລຍະ | - | (489) | (489) |
| **ນະວັນທີ 31 ທັນວາ 2015** | - | **979** | **979** |

ລາຍລະອຽດການຈັດຊັ້ນໜີ້ ແລະ ເງິນແຮຕາມຂໍ້ກຳນົດຂອງ ທະນາຄານແຫ່ງ ສປປ ລາວ ນະວັນທີ 31 ທັນວາ 2015 ມີດັ່ງນີ້:

| *ການຈັດຊັ້ນ* | *ຍອດເຫຼືອເງິນກູ້ ລ້ານກີບ* | *ເງິນແຮສະເພາະ ລ້ານກີບ* | *ເງິນແຮທົ່ວໄປ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|---|
| *ໜີ້ປົກກະຕິ* | 97,888 | - | 979 | 979 |
| *ໜີ້ຄວນເອົາໃຈໃສ່* | - | - | - | - |
| *ໜີ້ຕໍ່າກວ່າມາດຕະຖານ* | - | - | - | - |
| *ໜີ້ສົງໃສ* | - | - | - | - |
| *ໜີ້ສູນ* | - | - | - | - |
| **ລວມ** | **97,888** | - | **979** | **979** |

## 14. ຊັບສິນບັດຄົງທີ່

### *14.1 ຊັບສິນບັດຄົງທີ່ທີ່ມີຕົວຕົນ*

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ມີຕົວຕົນ ໃນໄລຍະແຕ່ວັນທີ 26 ມີນາ 2015 ເຖິງວັນທີ 31 ທັນວາ 2015 ມີດັ່ງນີ້:

| | *ອາຄານ ແລະ ການປັບປຸງ ລ້ານກີບ* | *ເຟີນີເຈີ & ເຄື່ອງຕົບແຕ່ງ ລ້ານກີບ* | *ອຸປະກອນ ຄອມພິວເຕີ ລ້ານກີບ* | *ພາຫະນະ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|---|---|
| **ຕົ້ນທຶນ:** | | | | | |
| ນະວັນທີ 26 ມີນາ 2015 | - | - | - | - | - |
| ຊື້ເຂົ້າໃນໄລຍະ | 7,448 | 4,912 | 2,011 | 1,176 | 15,547 |
| ນະວັນທີ 31 ທັນວາ 2015 | 7,448 | 4,912 | 2,011 | 1,176 | 15,547 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | | | | |
| ນະວັນທີ 26 ມີນາ 2015 | - | - | - | - | - |
| ຄ່າຫຼຸ້ຍຫ້ຽນພາຍໃນໄລຍະ | 1,118 | 715 | 488 | 154 | 2,475 |
| ນະວັນທີ 31 ທັນວາ 2015 | 1,118 | 715 | 488 | 154 | 2,475 |
| **ມູນຄ່າສຸດທິ:** | | | | | |
| ນະວັນທີ 31 ທັນວາ 2015 | 6,330 | 4,197 | 1,523 | 1,022 | 13,072 |

### *14.2 ຊັບສິນບັດຄົງທີ່ບໍ່ມີຕົວຕົນ*

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນ ໃນໄລຍະແຕ່ວັນທີ 26 ມີນາ 2015 ເຖິງວັນທີ 31 ທັນວາ 2015 ມີດັ່ງນີ້:

| | *ຕົ້ນທຶນເລີ່ມຕົ້ນ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|
| **ຕົ້ນທຶນ:** | | |
| ນະວັນທີ 26 ມີນາ 2015 | - | - |
| ຊື້ເຂົ້າໃນໄລຍະ | 2,129 | 2,129 |
| ນະວັນທີ 31 ທັນວາ 2015 | 2,129 | 2,129 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | |
| ນະວັນທີ 26 ມີນາ 2015 | - | - |
| ຄ່າຫຼຸ້ຍຫ້ຽນພາຍໃນໄລຍະ | 816 | 816 |
| ນະວັນທີ 31 ທັນວາ 2015 | 816 | 816 |
| **ມູນຄ່າສຸດທິ:** | | |
| ນະວັນທີ 31 ທັນວາ 2015 | 1,313 | 1,313 |

## 15. ດອກເບ້ຍຄ້າງຮັບ

| | *31 ທັນວາ 2015* |
|---|---|
| | *ລ້ານກີບ* |
| ດອກເບ້ຍຄ້າງຮັບຈາກເງິນຢູ່ທະນາຄານອື່ນ | 2 |
| ດອກເບ້ຍຄ້າງຮັບຈາກເງິນກູ້ໃຫ້ແກ່ລູກຄ້າ | 271 |
| ດອກເບ້ຍຄ້າງຮັບຈາກຫຼັກຊັບຖືໄວ້ຈົນຄົບກຳນົດ | 3,925 |
| | **4,198** |

## 16. ຊັບສິນອື່ນໆ

| | *31 ທັນວາ 2015* |
|---|---|
| | *ລ້ານກີບ* |
| ລາຍຈ່າຍລ່ວງໜ້າ | 19,669 |
| | **19,669** |

## 17. ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ

### *17.1* ເງິນຝາກກະແສລາຍວັນ

| | *31 ທັນວາ 2015* |
|---|---|
| | *ລ້ານກີບ* |
| **ເງິນຝາກກະແສລາຍວັນຈາກທະນາຄານພາຍໃນ** | |
| ທະນາຄານ ANZ, ສາຂາປະເທດລາວ | 30,000 |
| | **30,000** |

### *17.2* ທຶນກູ້ຢືມ

| | *31 ທັນວາ 2015* |
|---|---|
| | *ລ້ານກີບ* |
| **ກູ້ຢືມຈາກທະນາຄານຕ່າງປະເທດ** | |
| ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | 407,400 |
| | **407,400** |

ກູ້ຢືມຈາກທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ ແມ່ນເປັນສະກຸນເງິນໂດລາ, ມີໄລຍະເວລາ 5 ປີ ແລະ ມີອັດຕາດອກເບ້ຍ 1.67% ຕໍ່ປີ.

## 18. ໜີ້ຕ້ອງສົ່ງລູກຄ້າ

ລາຍລະອຽດໜີ້ຕ້ອງສົ່ງລູກຄ້າ ນະວັນທີ 31 ທັນວາ 2015 ມີດັ່ງນີ້:

| | *31 ທັນວາ 2015*<br>*ລ້ານກີບ* |
|---|---|
| ເງິນຝາກກະແສລາຍວັນ | |
| - ເປັນເງິນກີບ | 2,630 |
| - ເປັນເງິນຕາຕ່າງປະເທດ | 49,046 |
| | **51,676** |
| ເງິນຝາກປະຢັດ | |
| - ເປັນເງິນກີບ | 1,622 |
| - ເປັນເງິນຕາຕ່າງປະເທດ | 16,561 |
| | **18,183** |
| ເງິນຝາກປະຈໍາ | |
| - ເປັນເງິນກີບ | 1,093 |
| - ເປັນເງິນຕາຕ່າງປະເທດ | 2,140 |
| | **3,233** |
| | **73,092** |

ອັດຕາດອກເບ້ຍຂອງມູນຄ່າທີ່ຕ້ອງສົ່ງໃຫ້ລູກຄ້າໃນລະຫວ່າງປີມີດັ່ງນີ້:

| | *ສໍາລັບໄລຍະແຕ່ ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015*<br>*ລ້ານກີບ*<br>*ອັດຕາດອກເບ້ຍ% ຕໍ່ປີ* |
|---|---|
| ເງິນຝາກກະແສລາຍວັນເປັນກີບ | ບໍ່ມີດອກເບ້ຍ |
| ເງິນຝາກກະແສລາຍວັນເປັນເງິນຕາຕ່າງປະເທດ | ບໍ່ມີດອກເບ້ຍ |
| ເງິນຝາກປະຢັດເປັນເງິນກີບ | 1.00% |
| ເງິນຝາກປະຢັດເປັນເງິນໂດລາ | 1.25% |
| ເງິນຝາກປະຢັດເປັນເງິນບາດ | 0.50% |
| ເງິນຝາກປະຈໍາເປັນເງິນກີບ | 3.00% - 9.00% |
| ເງິນຝາກປະຈໍາເປັນເງິນໂດລາ | 2.00% - 6.25% |
| ເງິນຝາກປະຈໍາເປັນເງິນບາດ | 0.75% - 4.50% |

## 19. ໜີ້ສິນອື່ນໆ

| | 31 ທັນວາ 2015<br>ລ້ານກີບ |
|---|---|
| ໜີ້ຕ້ອງສົ່ງໃຫ້ ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | 45,776 |
| ໜີ້ຕ້ອງສົ່ງໃຫ້ພະນັກງານ | 3,679 |
| ອື່ນໆ | 101 |
| | **49,556** |

## 20. ໜີ້ສິນອາກອນ

*ອາກອນກຳໄລ ("PT")*

ສາຂາມີພັນທະຕ້ອງຈ່າຍອາກອນໃນອັດຕາ 24% ຈາກກຳໄລ ລວມກ່ອນຫັກອາກອນ ໂດຍສອດຄ່ອງຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 05/ສພຊ, ລົງວັນທີ່ 20 ທັນວາ 2011 ເຊິ່ງມີຜົນບັງຄັບໃຊ້ໃນ ຫຼື ຫຼັງວັນທີ 01 ມັງກອນ 2013.

| | *ສຳລັບໄລຍະແຕ່ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015*<br>*ລ້ານກີບ* |
|---|---|
| ຂາດທຶນກ່ອນອາກອນ | (14,105) |
| ປຽບທຽບອາກອນທີ່ເກີດຈາກຄວາມແຕກຕ່າງລະຫວ່າງການປະຕິບັດທາງການບັນຊີ ແລະ ກົດໝາຍສ່ວຍສາອາກອນ | 745 |
| **ອາກອນລາຍໄດ້** | **(13,360)** |
| **ລາຍຈ່າຍອາກອນກຳໄລໃນປີ, ຕາມອັດຕາກົດໝາຍ 24%** | **-** |
| ອາກອນກຳໄລທີ່ຕ້ອງຈ່າຍໃນຕົ້ນປີ | - |
| ອາກອນກຳໄລທີ່ໄດ້ຈ່າຍພາຍໃນປີ | - |
| **ອັດຕາອາກອນທີ່ຕ້ອງຈ່າຍນະທ້າຍປີ** | **-** |

ລາຍການເສຍອາກອນຂອງສາຂາຂຶ້ນຢູ່ກັບການກວດສອບຂອງເຈົ້າໜ້າທີ່ສ່ວຍສາອາກອນ ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນ ແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເທດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນ ອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງສຸດທ້າຍຂອງເຈົ້າໜ້າທີ່ສ່ວຍສາອາກອນ.

## 21. ທຶນຈົດທະບຽນຖອກແລ້ວ

ການເຄື່ອນໄຫວ ທຶນຈົດທະບຽນຖອກແລ້ວພາຍໃນປີ ມີດັ່ງນີ້:

| | *ສຳລັບໄລຍະວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015* |
|---|---|
| | *ລ້ານກີບ* |
| ຍອດຍົກມາ | - |
| ທຶນຈົດທະບຽນຖອກເພີ່ມພາຍໃນໄລຍະ | 405,100 |
| **ຍອດເຫຼືອທ້າຍ** | **405,100** |

## 22. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

| | *31 ທັນວາ 2015* |
|---|---|
| | *ລ້ານກີບ* |
| ເງິນສົດໃນກຳມື | 4,260 |
| ເງິນຝາກກະແສລາຍວັນຢູ່ ທຫລ | 335,498 |
| ເງິນຝາກກະແສລາຍວັນຢູ່ທະນາຄານອື່ນໆ | 37,775 |
| | **377,533** |

## 23. ບັນດາລາຍການເຄື່ອນໄຫວກັບລາຍການພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນອື່ນທີ່ກ່ຽວຂ້ອງແມ່ນທຸກໆລາຍການເຄື່ອນໄຫວທີ່ໄດ້ດຳເນີນງານກັບພາກສ່ວນອື່ນເຊິ່ງມີສາຍພົວພັນກັບສາຂາ, ພາກສ່ວນທີ່ຈະກ່ຽວຂ້ອງກັບສາຂາ ຖ້າຫາກວ່າ:

(a) ແບບທາງກົງ ຫຼື ແບບທາງອ້ອມ ໂດຍຜ່ານໜຶ່ງ ຫຼື ຫຼາຍສື່ກາງ, ພາກສ່ວນອື່ນຈະຕ້ອງ:

- ມີການຄວບຄຸມ(ຖືກຄວບຄຸມໂດຍ), ຫຼື ພາຍໃຕ້ການຄວບຄຸມທົ່ວໄປກັບສາຂາ (ໃນນີ້ລວມມີບໍລິສັດແມ່, ສາຂາ ແລະ ສະມາຊິກຂອງ ສາຂາ);
- ມີຜົນປະໂຫຍດນຳກັນກັບສາຂາເຊິ່ງສິ່ງຜົນກະທົບທີ່ໃຫຍ່ຫຼວງຕໍ່ກັບສາຂາ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມສາຂາ.

(b) ພາກສ່ວນດັ່ງກ່າວແມ່ນມີຮຸ້ນສ່ວນນຳສາຂາ

(c) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກຄົນສຳຄັນຂອງຜູ້ບໍລິຫານຫຼັກຂອງສາຂາ ຫຼື ບໍລິສັດແມ່;

(d) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນສະເພາະທີ່ໄດ້ກ່າວເຖິງໃນຂໍ້ (a) ຫຼື (d);

(e) ພາກສ່ວນທີ່ກ່ຽວຂ້ອງ ກໍ່ແມ່ນຜູ້ທີ່ຄວບຄຸມທະນາຄານ, ມີສ່ວນຮ່ວມໃນການຄວບຄຸມ ຫຼືອິດທິພົນອັນໃຫຍ່ຫຼວງ, ຫຼື ມີສິດທິອຳນາດການໃນການອອກສຽງສ່ວນໃຫຍ່ຕໍ່ ທະນາຄານທີ່ດຳເນີນທຸລະກິດຢູ່, (ໂດຍທາງກົງ ຫຼື ທາງອ້ອມ), ທຸກໆພາກສ່ວນທີ່ໄດ້ກ່າວເຖິງໃນຂໍ້(c) ຫຼື (d); ຫຼື

(f) ພາກສ່ວນທີ່ກ່ຽວຂ້ອງແມ່ນແຜນຜົນປະໂຫຍດພາຍຫຼັງອອກວຽກຂອງພະນັກງານຂອງ ສາຂາ ຫຼື ທະນາຄານ ຫຼື ທະນາຄານອື່ນໆທີ່ມີສາຍພົວພັນກັບສາຂາ.

## 23. ບັນດາລາຍການເຄື່ອນໄຫວກັບລາຍການພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງໃນວັນທີ 31 ທັນວາ 2015 ມີດັ່ງຕໍ່ໄປນີ້:

| *ພາກສ່ວນທີ່ກ່ຽວຂ້ອງ* | *ສາຍພົວພັນ* | *ທຸລະກຳ* | *31 ທັນວາ 2015 ໜີ້ຕ້ອງຮັບ/(ໜີ້ຕ້ອງສົ່ງ) ລ້ານກີບ* |
|---|---|---|---|
| ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | ທະນາຄານແມ່ | ເງິນຝາກກະແສລາຍວັນຢູ່ ທະນາຄານແມ່ | 28,889 |
| | | ກູ້ຢືມຈາກທະນາຄານແມ່ | (407,400) |
| | | ໜີ້ຕ້ອງສົ່ງອື່ນໆໃຫ້ທະນາຄານແມ່ | (45,776) |

ທຸລະກຳທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງລະຫວ່າງໃນລະຫວ່າງປີມີດັ່ງນີ້:

| | *ສຳລັບໄລຍະ ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015 ລ້ານກີບ* |
|---|---|
| ລາຍຈ່າຍດອກເບ້ຍສຳລັບການກູ້ຢືມ ຈາກ ທະນາຄານແຫ່ງປະເທດຈີນ, ສຳນັກງານໃຫຍ່ | 1,378 |

***ການເຄື່ອນໄຫວກັບບຸກຄະລາກອນທີ່ສຳຄັນຂອງສາຂາ***

ຜົນຕອບແທນຕໍ່ກັບຄະນະບໍລິຫານມີດັ່ງນີ້:

| | *ສຳລັບໄລຍະ ວັນທີ 26 ມີນາ 2015 ເຖິງ ວັນທີ 31 ທັນວາ 2015 ລ້ານກີບ* |
|---|---|
| ເງິນເດືອນ ແລະ ໂບນັດ | 1,527 |
| | **1,527** |

## 24. ເຫດການທີ່ເກີດຂຶ້ນພາຍຫຼັງມື້ປິດບັນຊີ

ນອກຈາກສິ່ງທີ່ໄດ້ເປີດເຜີຍໃນເອກະສານລາຍງານການເງິນສະບັບນີ້, ນະມື້ສ້າງເອກະສານລາຍງານ, ບໍ່ມີເຫດການໃດເກີດຂຶ້ນຫລັງຈາກວັນ ທີ 31 ທັນວາ 2015 ທີ່ມີຜົນກະທົບທີ່ມີຜົນກະທົບອັນໃຫຍ່ຫຼວງຕໍ່ຖານະການເງິນຂອງສາຂາ ນະວັນທີ 31 ທັນວາ 2015.

| ກະກຽມໂດຍ: | ອະນຸມັດໂດຍ: |
| --- | --- |
| ທ່ານ Li Zhiwei | ທ່ານ Li Zhiyong |
| ຜູ້ຈັດການບໍລິຫານການເງິນ ແລະ ໜ່ວຍບໍລິການການດຳເນີນງານ | ຜູ້ຈັດການທົ່ວໄປ |

ນະຄອນຫຼວງວຽງຈັນ, ສປປ ລາວ

31 ມີນາ 2016